16 ສິງຫາ 2010

# ປະກາດແຈ້ງການເຖິງພາກສ່ວນກ່ຽວຂ້ອງທີ່ມີຄວາມສົນໃຈສະໝັກຂໍທຶນ ຈາກກອງທຶນຮ່ວມໃນການວິໃຈ ລະບົບນິເວດວິທະຍາ (CEPF) ຢູ່ພາກພື້ນອິນໂດຈີນ-ພະມ້າ

ກອງທຶນຮ່ວມໃນການວິໃຈລະບົບນິເວດວິທະຍາ (CEPF) ສ້າງຕັ້ງຂຶ້ນເພື່ອຮັກສາລະບົບນິເວດວິທະຍາ ໃຫ້ມີຄວາມອຸດົມສົມບູນຢູ່ໃນພາກພື້ນ ແລະ ໂລກ ຊຶ່ງພາກພື້ນອິນໂດຈີນ-ພະມ້າ ກໍເປັນເຂດທີ່ມີຄວາມອຸດົມສົມບູນເຕັມໄປດ້ວຍຊີວະນາພັນປະເພດຕ່າງໆ. ກອງທຶນ CEPF ເປັນການລິເລີ້ມ ໂດຍການຮ່ວມມື ຂອງອົງການພັດທະນາແຫ່ງປະເທດຝຣັ່ງ (AFD), ອົງການອະນຸລັກທຳມະຊາດສາກົນ, ອົງການອຳນວຍຄວາມສະດວກໃຫ້ແກ່ສິ່ງແວດລ້ອມໂລກ, ລັດທະບານແຫ່ງປະເທດຍີ່ປຸ່ນ, ມູນນິທິຈອນ ດີ ແລະ ແຄັດເທີຣີນ ທີ ແມັກອາເທີ (John D. and Catherine T. MacArthur) ແລະ ທະນາຄານໂລກ ໂດຍມີເປົ້າໝາຍພື້ນຖານ ເພື່ອຮັບປະກັນໃຫ້ອົງການ ເຮັດວຽກເພື່ອສັງຄົມ ເຂົ້າຮ່ວມໃນການອະນຸລັກຊີວະນາໆພັນ.

ອົງການ BirdLife ສາກົນ ປະຈຳພາກພື້ນອິນໂດຈີນ, ມີບົດບາດໃນການເປັນທີມງານຈັດຕັ້ງປະຕິບັດໂຄງການລະດັບພາກພື້ນ (RIT) ໃຫ້ແກ່ກອງທຶນຮ່ວມໃນການວິໃຈລະບົບນິເວດວິທະຍາ (CEPF) ຢູ່ພາກພື້ນອິນໂດຈີນ-ພະມ້າ, ຂໍເຊີນບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ, ກຸ່ມສະມາຄົມ, ແລະ ອົງການຈັດຕັ້ງຊ່ວຍເຫລືອສັງຄົມອື່ນໆ ສົ່ງບົດສະເໜີເຂົ້າມາຫາອົງການຕາມທີ່ຢູ່ລຸ່ມນີ້.

ນີ້ແມ່ນ ການປະກາດຄັ້ງທີ່ 3 ຂອງອົງການ BirdLife ແລະ ກອງທຶນ CEPF ສຳລັບບັນດາປະເທດຢູ່ພາກພື້ນອິນໂດຈີນ-ພະມ້າ. ມື້ປິດຮັບບົດສະເໜີໂຄງການ ແມ່ນ ວັນທີ 30 ກັນຍາ 2010, ເວລາ 17:30 (ຕາມເວລາທ້ອງຖິ່ນຢູ່ນະຄອນຫລວງຮ່າໂນ້ຍ), ໃນໂອກາດນີ້, ຜູ້ສະໝັກສາມາດຍື່ນບົດສະເໜີໂຄງການເຖິງອົງການ BirdLife ສາກົນ ກ່ອນມື້ປິດຮັບສະໝັກ. ທັງນີ້, ເພື່ອທີ່ຕົນເອງຈະໄດ້ທົບທວນຄືນຂະບວນການຂອງການສະໝັກຕັ້ງແຕ່ຕອນຕົ້ນ. ການປະກາດ ແຈ້ງການຄັ້ງນີ້ ໄດ້ເປີດກວ້າງສຳລັບ 4 ປະເທດຊາບທົ່ວເຖິງກັນເຊັ່ນ: ປະເທດກຳປູເຈັຍ, ສປປ ລາວ, ລາຊອານາຈັກໄທ ແລະ ສສ ຫວຽດນາມ ພ້ອມທັງໃຫ້ລະບຸທີ່ຢູ່ໃສ່ບ່ອນຫວ່າງ ຕາມແບບຟອມຂອງກອງທຶນ CEPF ດ້ວຍ.

ສິ່ງທີ່ສຳຄັນຄືຜູ້ສະໝັກຈທະຕ້ອງມີຄວາມເຂົ້າໃຈຕໍ່ຍຸດທະສາດ ແລະ ແນວທາງໃນການໃຫ້ທຶນສຳລັບພາກພື້ນອິນໂດຈີນ - ພະມາ, ຊຶ່ງໄດ້ສັງລວມເປັນພາສາອັງກິດ, ກຳປູເຈັຍ, ລາວ, ໄທ ແລະ ຫວຽດນາມ ຕາມທີ່ຢູ່ທາງເວັບໄຊໄດ້ທີ່ http://www.birdlifeindochina.org/cepf/eligibility-criteria ແລະ ເອກະສານສະບັບສົມບູນທີ່ເປັນສະບັບພາສາອັງກິດໄດ້ທີ່ http://cepf.net/Documents/final.indoburma_indochina.ep.pdf (PDF 2.5MB).

ສິ່ງທີ່ຄວນເອົາໃຈໃສ່ສຳລັບຜູ້ສະໝັກທຸກທ່ານ ທີ່ສະໝັກພາຍໃຕ້ການປະກາດແຈ້ງການຮັບບົດສະເໜີໂຄງການ ປະຈຳສົກປີ 2010, ທຶນດັ່ງກ່າວມີຄວາມເປັນໄປໄດ້ ໃນການສະໜັບສະໜູນໃຫ້ແກ່ໂຄງການ ທີ່ສົມທົບທຶນກັນ ແລະ ມີບົດບາດ ໃນການເປັນຜູ້ນຳ ສຳລັບອົງການຈັດຕັ້ງຊ່ວຍເຫລືອສັງຄົມອື່ນໆ. ນອກຈາກນັ້ນ, ສຳລັບ ໃບສະໝັກ ທີ່ເນັ້ນໜັກຕາມບູລິມະສິດຂອງໂຄງການແຫ່ງຊາດໃນການປົກປ້ອງ ການສູນພັນຂອງເສືອໂຄ່ງ ຊຶ່ງອົງການຈະໃຫ້ການສະໜັບສະໜູນເປັນກໍລະນີພິເສດ.

**<u>ທິດທາງຍຸດທະສາດ ແລະ ບູລິມະສິດໃນການລົງທຶນ 1.</u> ປົກປັກຮັກສາຊະນິດພືດ/ສັດ ທີ່ຖືກຮຸກຮານ ຢ່າງແຜ່ຫຼາຍ ຢູ່ໃນພາກພື້ນອິນໂດຈີນ ດ້ວຍການຫລຸດຜ່ອນສິ່ງຮຸກຮານອັນຕົ້ນຕໍ**

***ບູລິມະສິດໃນການລົງທຶນ 1.1 ວິໃຈ ແລະ ສ້າງຄວາມປອດໄພໃຫ້ແກ່ຊີວະນາໆພັນຈຳນວນ 67 ຊະນິດຫລັກ ທີ່ຖືກຮຸກຮານຢ່າງແຜ່ຫລາຍ ຈາກການທຳລາຍ ແລະ ການຄ້າທີ່ຜິດກົດໝາຍ***

ອົງການ BirdLife ແລະ ກອງທຶນ CEPF ມີຄວາມຍິນດີ ຂໍເຊີນພາກສ່ວນກ່ຽວຂ້ອງ ນຳສົ່ງບົດສະເໜີໂຄງການ ໃນການເຮັດວິໃຈຮ່ວມຕາມສາຍພັນສັດທີ່ເປັນບູລິມະສິດທີ່ມີຢູ່ໃນໂລກດັ່ງນີ້: (i) ຄວາຍປ່າ (Wild Water Buffalo *Bubalus bubalis)*; (ii) ກວາງໃຫຍ່ (Eld's Deer *Cervus eldii*); (iii) ກວາງນ້ອຍ (Hog Deer *Axis porcinus)*; (iv) ເສືອໂຄ່ງ (Tiger *Panthera tigris)*; (v) ເສືອແມວ (Fishing Cat *Prionailurus viverrinus*); (vi) ເສົາຫລາ (Saola *Pseudoryx nghetinhensis)*; (vii) ລິງລົມ (Delacour’s Leaf Monkey *Trachypithecus delacouri)*; (viii) ຄ່າງຫາງອກ (Indochinese Silvered Langur *T. Germaini)*; (ix) ຄ່າງຫ້າສີ (Red-shanked Douc *Pygathrix nemaeus)*; (x) ຄ່າງສີ່ສີ (Grey-shanked Douc *P. Cinerea)*; (xi) ຄ່າງສາມສີ (Black-shanked Douc *P. Nigripes)*; (xii) ທະນີສີດຳ (Western Black-crested Gibbon *Nomascus concolor)*; (xiii) ທະນີແກ້ມຂາວ ພາກເຫນືອ (Northern White-cheeked Gibbon *N. Leucogenys)*; (xiv) ທະນີແກ້ມຂາວ ພາກໃຕ້ (Southern White-cheeked Gibbon *N. Siki)*; (xv) ນົກຍູງ (Green Peafowl *Pavo muticus)*; (xvi) ນົກກະຊອນ (White-shouldered Ibis *Pseudibis davisoni)*; (xvii) ນົກກະສາໃຫຍ່ (Giant Ibis *Thaumatibis gigantean)*; (xviii) ແຮ້ງເທົາຫລັງຂາວ (White-rumped Vulture *Gyps bengalensis)*; (xix) ແຮ້ງສົບນ້ຳຕານ (Slender-billed Vulture *G. tenuirostris)*; (xx) ແຮ້ງຫົວແດງ (Red-headed Vulture *Sarcogyps calvus)*; (xxi) ນົກຟລໍຣິແກນເບັນກາລ (Bengal Florican *Houbaropsis bengalensis)*; (xxii) ນົກກະທຸ (Masked Finfoot *Heliopais personata)*; (xxiii) ແຂ້ນ້ຳຈືດ (Siamese Crocodile *Crocodylus siamensis)*; (xxiv) ເຕົ່າໂຄກ (Asian Giant Tortoise *Manouria emys)*; (xxv) ເຕົ່າອອງລາຍ (Painted Terrapin *Callagur borneoensis)*; (xxvi) ປູລູ/ຕະພາບນ້ຳ (Striped Narrow-headed Softshell Turtle *Chitra chitra)*; (xxvii) ປາຝາໄລນ້ຳຂອງ (Mekong Freshwater Stingray *Dasyatis laosensis)*; (xxviii) ປາຝາໄລນ້ຳເຈົ້າພະຍາ (Giant Freshwater Stingray *Himantura chaophraya)*; (xxix) ປາຝາໄລລາຍ *H. oxyrhynchus*; (xxx) ປາຝາໄລນ້ຳຈືດ (White-edged Freshwater Whipray *H. Signifier)*; (xxxi) ປາບຶກ *Pangasianodon gigas*; (xxxii) ປາໂດ (Giant Dog-eating Catfish *Pangasius sanitwongsei)*; (xxxiii) ປາແຂ້ວເລື່ອຍ *Pristis microdon*; (xxxiv) ປາອີ່ສືກ (Jullien’s Golden Carp *Probarbus jullieni)*; (xxxv) ປາແຊັດລາວ (Laotian Shad *Tenualosa thibaudeaui)*; ແລະ

(xxxvi) ປາປາກ (Asian Arowana *Scleropages formosus).*

*ບູລິມະສິດໃນການລົງທຶນ1.5 ດຳເນີນການຄົ້ນຄວ້າ ຈຳນວນສັດ 12 ຊະນິດ ທີ່ມີຄວາມຈຳເປັນຈະຕ້ອງໄດ້ປັບປຸງຂໍ້ມູນຂ່າວສານທີ່ສຳຄັນ ກ່ຽວກັບສະຖານະພາບ ແລະ ການແຜ່ກະຈາຍຂອງພວກມັນ*

ອົງການ BirdLife ແລະ ກອງທຶນ CEPF ມີຄວາມຍິນດີ ຂໍເຊີນໃຫ້ບັນພາກສ່ວນກ່ຽວຂ້ອງ ນຳສົ່ງບົດສະເໜີໂຄງການກ່ຽວກັບການອະນຸລັກຮັກສາ ສັດປ່າຕາມສາຍພັນຕ່າງໆທີ່ມີຢູ່ໃນໂລກດັ່ງນີ້: (i) ນົກແອ່ນ (White-eyed River Martin *Eurychelidon sirintarae)*; (ii) ນົກຊາຍເລນປາກບ່ວງ (Spoon-billed Sandpiper *Eurynorhynchus pygmeus)*; ແລະ (iii) ໄກ່ຟ້າ (Edwards's Pheasant *Lophura edwardsi).*

**<u>ທິດທາງຍຸດທະສາດ ແລະ ບູລິມະສິດໃນການລົງທຶນ 2.</u> ສ້າງໃຫ້ມີວິທີການໃໝ່ ໂດຍການໃຫ້ປະຊາຊົນ ຢູ່ໃນຊຸມຊົນເປັນຕົວຫລັກໃນການອະນຸລັກຊີວະນາໆພັນ ຢູ່ໃນ 28 ພື້ນທີ່ເປົ້າໝາຍ**

*ບູລິມະສິດໃນການລົງທຶນ 2.1 ຈັດຕັ້ງການລິເລີ້ມຄຸ້ມຄອງການອະນຸລັກ ໂດຍອີງໃສ່ຄູ່ຮ່ວມປະຕິບັດວຽກງານເປັນຫລັກ ແລະ ລິເລີ້ມເອົາໃຈໃສ່ໃນຈຳນວນ 28 ເຂດພື້ນທີ່ສະຫງວນທາງດ້ານຊີວະນາໆພັນທີ່ສຳຄັນ*

ອົງການ BirdLife ແລະ ກອງທຶນ CEPF ມີຄວາມຍິນດີ ຂໍເຊີນພາກສ່ວນກ່ຽວຂ້ອງ ນຳສົ່ງ ບົດສະເໜີໂຄງການຮ່ວມໃນການວິໃຈ ໂດຍ CEPF ໄດ້ບູລິມະສິດໃນຂົງເຂດຊີວະນາໆພັນທີ່ສຳຄັນ ທີ່ມີປະໂຫຍດຕໍ່ການເອົາໃຈໃສ່ເຮັດວຽກຢູ່ໃນພື້ນທີ່ຕ່າງໆດັ່ງນີ້: (i) ແມ່ນ້ຳຂອງທີ່ໄຫລຈາກ ສປປ ລາວ ທາງພາກໄຕ້ ເຖິງແຂວງຊຽງແຕງ, ປະເທດກຳປູເຈັຍ; (ii) ແມ່ນ້ຳເຊກອງ, ປະເທດກຳປູເຈັຍ; (iii) ແມ່ນ້ຳເຊສານ, ປະເທດກຳປູເຈັຍ; (iv)ເຊຣໂປກ, ປະເທດກຳປູເຈັຍ; (v) ພາກເໜືອແມ່ນ້ຳຂອງ ສປປ ລາວ; (vi) ແມ່ນ້ຳຂອງທີ່ໄຫລຈາກ ຫລວງພະບາງ ເຖິງ ນະຄອນຫລວງວຽງຈັນ; (vii) ດິນທາມບຶງກົງດຫງອງ; (viii) ດິນທາມເຊຈຳພອນ; (ix) ແມ່ນ້ຳຂອງທີ່ໄຫລຈາກພູຊຽງທອງ ເຖິງ ສີ່ພັນດອນ; ແລະ (x) ດິນທາມສີ່ພັນດອນ.

*ບູລິມະສິດໃນການລົງທຶນ 2.2 ພັດທະນາມາດຕະຖານ ແລະ ແຜນງານໃນລະດັບພາກພື້ນ ເພື່ອແກ້ໄຂການສະແຫວງຫາຜົນປະໂຫຍດເກີນຂອບເຂດທາງດ້ານຊີວະນາໆພັນ ແລະ ທົດລອງປະຕິບັດແຜນງານຢູ່ສະຖານທີ່ເປົ້າໝາຍທີ່ໄດ້ເລືອກເປັນພື້ນທີ່ທົດລອງ*

ບັນດາໂຄງການທີ່ເຮັດວຽກກ່ຽວຂ້ອງໂດຍກົງກັບບູລິມະສິດໃນການລົງທຶນນີ້ ແມ່ນສະໜັບສະໜູນ

**<u>ທິດທາງຍຸດທະສາດ ແລະ ບູລິມະສິດໃນການລົງທຶນ 3.</u> ຮວບຮວມເອົາຜູ້ຈັດຕັ້ງປະຕິບັດ ທີ່ສຳຄັນເຂົ້າກັນເພື່ອຈຸດປະສົງໃນການເຮັດວຽກຮ່ວມກັນ ດ້ານການອະນຸລັກຊີວະນາໆພັນ ແລະ ການພັດທະນາ ໂດຍເນັ້ນໜັກໃສ່ເຂດພື້ນທີ່ຜາຫີນເນີນສູງ ທີ່ຢູ່ທາງພາກເໜືອ, ແມ່ນ້ຳຂອງ ແລະ ບັນດາແມ່ນ້ຳສາຂາ ທີ່ສຳຄັນຕ່າງໆ**

*ບູລິມະສິດການລົງທຶນ 3.1 ສະໜັບສະໜູນໃຫ້ພາກສ່ວນອົງການຈັດຕັ້ງສ່ວຍເຫລືອສັງຄົມ ໃນການວິໃຈນະໂຍບາຍພັດທະນາແຜນງານ ແລະ ໂຄງການຕ່າງໆ, ປະເມີນຜົນກະທົບຂອງພວກເຂົາ ຕໍ່ກັບການບໍລິການທາງດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ສະເໜີທາງເລືອກໃນການພັດທະນາ ແລະ ມາດຕະການ*

*ຫລຸດຜ່ອນ ທີ່ເໝາະສົມ*

ອົງການ BirdLife ແລະ ທຶນ CEPF ມີຄວາມຍິນດີ ຂໍເຊີນບັນພາກສ່ວນກ່ຽວຂ້ອງ ນຳສົ່ງບົດສະເໜີໂຄງການຮ່ວມໃນການວິໃຈ ໂດຍ CEPF ໄດ້ບູລິມະສິດໃນຂົງເຂດທີ່ເຮັດວຽກ ສະເພາະກິດຢູ່ໃນພື້ນທີ່ຕ່າງໆດັ່ງນີ້: (i) ໂຄງການສ້າງເຂື່ອນໄຟຟ້າພະລັງນ້ຳ ຢູ່ແມ່ນ້ຳຂອງຕອນລຸ່ມ; (ii) ການນຳໃຊ້ທີ່ດິນໃນການຜະລິດກະສິກຳຕາມແຄມຝັ່ງແມ່ນ້ຳ ແລະ ຕາມແມ່ນ້ຳ ສາຂາຢູ່ປະເທດກຳປູເຈັຍ; ແລະ (iii) ຄວາມບໍ່ຍືນຍົງໃນການຄຸ້ມຄອງລະບົບການປະມົງ ຢູ່ຕາມລຳນ້ຳຂອງ ແລະ ແມ່ນ້ຳສາຂາໃຫຍ່ຕ່າງໆ ພ້ອມທັງສາຍພັນປາຊະນິດຕ່າງໆ ໂດຍສະເພາະຢູ່ໃນເຂດວັງສະຫງວນ.

*ບູລິມະສິດໃນການລົງທຶນ 3.2 ຊຸກຍູ້ແນວຄິດລິເລີ້ມ ໃນການສະໜັບສະໜູນການອະນຸລັກຊີວະນາໆພັນ ຂອງໂຄງການ ແລະ ແຜນງານການພັດທະນາຕ່າງໆ*

ບັນດາໂຄງການທີ່ເຮັດວຽກກ່ຽວຂ້ອງໂດຍກົງກັບບູລິມະສິດໃນການລົງທຶນນີ້ ແມ່ນສະໜັບສະໜູນ

*ບູລິມະສິດການລົງທຶນ 3.3 ຕັ້ງເປົ້າໝາຍເພື່ອຂະຫຍາຍ ແລະ ສ້າງຄວາມຮັບຮູ້ໃຫ້ແກ່ນັກຂ່າວໜັງສືພິມ ແລະນັກກົດໝາຍ*

ອົງການ BirdLife ແລະ ກອງທຶນ CEPF ມີຄວາມຍິນດີ ຂໍເຊີນໃຫ້ບັນພາກສ່ວນກ່ຽວຂ້ອງ ນຳສົ່ງບົດສະເໜີໂຄງການທີ່ມີເປົ້າໝາຍ: (i) ລົນນະລົງໃຫ້ຄວາມຮູ້ກ່ຽວກັບຄວາມສຳຄັນແກ່ສັງຄົມ ແລະ ຜົນກະທົບສິ່ງແວດລ້ອມຢູ່ໃນປະເທດສາມລຸ່ມແມ່ນ້ຳຂອງ ທີ່ມີທ່າອ່ຽງໃນການສ້າງເຂື່ອນໄຟຟ້າພະລັງນ້ຳ ເພີ້ມຂື້ນຢູ່ທາງເໜືອແມ່ນ້ຳຂອງ; ແລະ (ii) ຜົນໄດ້ຮັບຈາກໂຄງການໃຫ້ທຶນໂດຍກອງທຶນ CEPF ເຂົ້າໃສ່ໃນການວາງແຜນນະໂຍບາຍ ທີ່ພົວພັນກັບເຂດພື້ນທີ່ຜາຫີນເນີນສູງ ທີ່ຢູ່ທາງພາກເໜືອຂອງ ສສ ຫວຽດນາມ.

---

ຜູ້ສະໝັກຈາກອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ, ສະມາຄົມ, ບໍລິສັດເອກະຊົນ ແລະ ອົງການຈັດຕັ້ງຊ່ວຍເຫລືອສັງຄົມຕ່າງໆສາມາດສະໝັກເພື່ອຂໍທຶນໄດ້ເຊັ່ນກັນ. ອົງການຂອງທ່ານ ຈະຕ້ອງມີບັນຊີທະນາຄານເປັນຂອງຕົນເອງ ແລະ ອະນຸຍາດໃຫ້ນຳໃຊ້ພາຍໃຕ້ກົດໝາຍ ຫຼື ໄດ້ຮັບການອະນຸມັດໃຫ້ເປັນອົງການຈັດຕັ້ງໃນການປະກອບສ່ວນຊ່ວຍເຫລືອສັງຄົມ. ສຳລັບພາກສ່ວນລັດ ວິສາຫະກິດອື່ນໆ ຫຼື ສະຖາບັນຕ່າງໆແມ່ນມີຄວາມເປັນໄປໄດ້ ໃນກໍລະນີທີ່ອົງການດັ່ງກ່າວເຫຼົ່ານັ້ນ: (i) ສາມາດປະຕິບັດງານໄດ້ຢ່າງອິດສະຫລະຈາກໜ່ວຍງານຂອງລັດຖະບານໂດຍຖືກຕ້ອງຕາມກົດໝາຍ; (ii) ມີສິດສະໝັກເພື່ອຂໍຮັບທຶນໃນນາມສ່ວນຕົວ; ແລະ (iii) ຈະບໍ່ຮ້ອງຂໍເອົາສິດໃນການຈັດການໃດໆ ໃນເມື່ອອົງການດັ່ງກ່າວ ໄດ້ຮັບການຍົກເວັ້ນເປັນກໍລະນີພິເສດໄປແລ້ວ.

ໃນການຄັດເລືອກເອົາຜູ້ທີ່ເໝາະສົມໃນການໄດ້ຮັບທຶນ, ຕາມທີ່ລະບຸຢູ່ໃນລາຍລະອຽດດັ່ງກ່າວມາຂ້າງເທິງນັ້ນຄືໄດ້ເນັ້ນໜັກໃສ່ສະເພາະຜູ້ທີ່ເຮັດວຽກເພື່ອສັງຄົມ ແລະ ໂດຍສະເພາະແມ່ນການເສີມສ້າງຄວາມເຂັ້ມແຂງໃຫ້ຜູ້ທີ່ເຮັດວຽກເພື່ອສັງຄົມ ແມ່ນສະໜັບສະໜູນໃຫ້ສະໝັກ. ໃນທີ່ນີ້, ຜູ້ສະໝັກ ອາດລວມທັງ ຜູ້ທີ່ເຮັດວຽກ

ຊ່ວຍເຫຼືອ ສັງຄົມເອງ ທີ່ມີຄວາມຈຳກັດທາງດ້ານຄວາມສາມາດ ຊຶ່ງຜູ້ສະໝັກທ່ານໃດຄິດວ່າອາດຈະບໍ່ໄດ້ຮັບທຶນ ຫຼື ຜູ້ທີ່ບໍ່ສາມາດສະໝັກໄດ້ເຊັ່ນ: ກຸ່ມສະມາຄົມ ຢູ່ໃນຊຸມຊົນ ແມ່ສະໜັບສະໜູນໃຫ້ສະໝັກໄດ້ເຊັ່ນກັນ. ນອກຈາກນີ້, ຜູ້ສະໝັກໃນນາມສ່ວນຕົວ ອົງການກໍສະໜັບສະໜູນ ໃຫ້ຂຽນບົດສະເໜີ ຮ່ວມກັບ ອົງການທີ່ເຮັດວຽກຊ່ວຍສັງຄົມ ເພື່ອຈະໄດ້ພັດທະນາການສະໝັກ ດີກວ່າທີ່ຈະສະໝັກເອງໂດຍກົງ. ສຳລັບຜູ້ສະໝັກທ່ານໃດ ທີ່ຍັງບໍ່ທັນໝັ້ນໃຈວ່າຕົນມີຄຸນສົມບັດທີ່ເໝາະສົມ ຫຼື ມີຄວາມເປັນໄປໄດ້ໃນການທີ່ຈະໄດ້ຮັບທຶນຈາກກອງທຶນ CEPF ກະລຸນາຕິດຕໍ່ຫາອົງການ BirdLife ສາກົນ ປະຈຳພາກພື້ນອິນໂດຈີນ, ໃນນາມເປັນທີມງານຈັດຕັ້ງປະຕິບັດ ຊຶ່ງສາມາດຕິດຕໍ່ໄດ້ຕາມທີ່ຢູ່ທາງອີເມລ ເຖິງ cepf-rit@birdlife.org.vn

ທຶນດັ່ງກ່າວຈະບໍ່ສາມາດນຳໃຊ້ໄດ້ໃນກໍລະນີຕ່າງໆດັ່ງນີ້: (i) ຈັດຊື້ທີ່ດິນ, ຍົກຍ້າຍ ຈັດສັນພື້ນທີ່ຄືນໃໝ່ ໃຫ້ແກ່ປະຊາຊົນແບບບໍ່ສະໝັກໃຈ (ລວມທັງການເຂົ້າໄປແທນທີ່ພື້ນທີ່ດິນນຳໃຊ້ຢູ່), ຫຼື ເພື່ອປະຕິບັດກິດຈະກຳ ທີ່ມີຜົນກະທົບທາງລົບຕໍ່ສິ່ງປຸກສ້າງທີ່ເປັນແຫຼ່ງວັດທະນະທຳ, ລວມທັງສິ່ງຕ່າງໆທີ່ມີຄວາມສຳຄັນຕໍ່ຄົນຢູ່ໃນຊຸມຊົນທ້ອງຖິ່ນ; (ii) ກິດຈະກຳທີ່ມີຜົນກະທົບທາງລົບກັບຄົນທ້ອງຖິ່ນ ຫຼື ບ່ອນທີ່ຄົນທ້ອງຖິ່ນເຫຼົ່ານີ້ບໍ່ສະໜັບສະໜູນກິດຈະກຳ ໂຄງການ; ຫຼື (iii) ໂຍກຍ້າຍ ຫຼື ປ່ຽນແປງສິ່ງປຸກສ້າງທີ່ມີຄຸນຄ່າທາງດ້ານວັດທະນະທຳ (ລວມທັງສະຖານທີ່ໆມີໂບຮານນະຄະດີ, ຊາກສັດດຶກດຳບັນ, ປະຫວັດສາດ, ສາສະໜາ ຫຼື ເອກະລັກທາງທຳມະຊາດ). ບົດສະເໜີ ສຳລັບກິດຈະກຳດັ່ງກ່າວ ຈະຕ້ອງໄດ້ຜ່ານການກວດສອບຕາມມາດຕະການ ຄວາມປອດໄພ ແລະນະໂຍບາຍຕ່າງໆ ຂອງທະນາຄານໂລກໄດ້ທາງເວັບໄຊນີ້: http://go.worldbank.org/WTA1ODE7T0

CEPF ຈະໃຫ້ທຶນໃນການອະນຸລັກຊີວະນາໆພັນເປັນສອງຮູບແບບຄື: ທຶນຫຼັກທີ່ຫລາຍກວ່າ US$20,000 ແລະທຶນຍ່ອຍ US$20,000 ຫຼື ໜ້ອຍກວ່ານັ້ນ. ຜູ້ສະໝັກທັງໝົດຈະຕ້ອງໄດ້ຍື່ນບົດສະເໜີໂຄງການເພື່ອກວດສອບ. ສຳລັບຜູ້ສະໝັກ ທີ່ຂໍທຶນຂະໜາດນ້ອຍ ສາມາດຂຽນບົດສະເໜີໂຄງການ ເປັນພາສາປະຈຳຊາດຕົນອັນໄດ້ແກ່ພາສາກຳປູເຈັຍ, ລາວ, ໄທ ແລະ ຫວຽດນາມ. ຜູ້ສະໝັກສາມາດກວດສອບເບິ່ງແບບຟອມໃນການສະໝັກໄດ້ທີ່ http://birdlifeindochina.org/cepf/application-process ຫຼື http://cepf.net/Documents/cepf.loi.doc. ກ່ອນທີ່ຜູ້ສະໝັກຈະຍື່ນເອກະສານຢ່າງເປັນທາງການ, ອົງການແນະນຳໃຫ້ປຶກສາ ກ່ຽວກັບກອບແນວທາງ ຂອງບົດສະເໜີໂຄງການ ແລະ ຄວາມເປັນໄປໄດ້ໃນການຖືກຄັດເລືອກໄດ້ໂດຍກົງ ກັບ ອົງການ BirdLife ສາກົນປະຈຳພາກພື້ນອິນໂດຈີນ, ຊຶ່ງເປັນທີມງານຈັດຕັ້ງປະຕິບັດກອງທຶນ ໄດ້ທາງອີເມລ cepf-rit@birdlife.org.vn

**ເມື່ອເອກະສານສະໝັກຂໍທຶນຫຼັກທີ່ຫລາຍກວ່າ US$20,000** ສຳເລັດ ຄວນສົ່ງໃຫ້ຕາມທີ່ຢູ່ທາງອີເມລ ເຖິງ cepfgrants@conservation.org ພ້ອມດ້ວຍເອກະສານຄັດຕິດມາພ້ອມ. ສຳລັບເອກະສານສະໝັກທີ່ໄດ້ຮັບຜ່ານທີ່ຢູ່ທາງອີເມລ, ຈະໄດ້ສົ່ງຕໍ່ໃຫ້ແກ່ທີມງານ ທີ່ຮັບຜິດຊອບຕາມຄວາມເໝາະສົມ. ຫລັງຈາກນັ້ນທີມງານຈະຕິດຕໍ່ຫາຜູ້ສະໝັກຕາມຂະບວນການ ແລະ ຂັ້ນຕອນຕ່າງໆ. ຖ້າຜູ້ສະໝັກຫາກມີຄຳຖາມ ແລະ ຂໍ້ສົງໃສໃດໆຢູ່ໃນລະຫວ່າງຂະບວນການ ແລະ ຂັ້ນຕອນໃນການພິຈາລະນາ ກະລຸນາສອບຖາມຕາມທີ່ຢູ່ທາງອີເມລເຖິງ cepfgrants@conservation.org.

**ເມື່ອເອກະສານສະໝັກຂໍທຶນຍ່ອຍທີ່ໜ້ອຍກວ່າ US$20,000 ຫຼື ໜ້ອຍກວ່ານັ້ນ** ສຳເລັດ ຄວນສົ່ງໃຫ້ຕາມທີ່ຢູ່ທາງອີເມລ ເຖິງ cepf-rit@birdlife.org.vn. ສຳລັບເອກະສານສະໝັກທີ່ໄດ້ຮັບ ຜ່ານທີ່ຢູ່ທາງອີເມລ, ຈະໄດ້

ສົ່ງຕໍ່ໃຫ້ແກ່ທີມງານ ທີ່ຮັບຜິດຊອບຕາມຄວາມເໝາະສົມ. ຫຼັງຈາກນັ້ນທີມງານ ຈະຕິດຕໍ່ຫາຜູ້ສະໝັກຕາມຂະບວນການ ແລະ ຂັ້ນຕອນຕ່າງໆ. ຖ້າຜູ້ສະໝັກຫາກມີຄຳຖາມ ແລະ ຂໍ້ສົງໃສໃດໆ ຢູ່ໃນລະຫວ່າງຂະບວນການ ແລະ ຂັ້ນຕອນໃນການພິຈາລະນາ ກະລຸນາສອບຖາມຕາມທີ່ຢູ່ທາງອີເມລເຖິງ cepf-rit@birdlife.org.vn

**<u>ໝາຍເຫດ</u>:** ອົງການ BirdLife ສາກົນ ບໍ່ຊຸກຍູ້ໃຫ້ອົງການໃດທີ່ຍື່ນເອກະສານສະບັບຈັດພິມເປັນສະບັບຕົ້ນໃຫ້ແກ່ອົງການ.

**ກະລຸນາຕິດຕໍ່ເພື່ອສອບຖາມຂໍ້ມູນເພີ້ມເຕີມໄດ້ທີ່:**

ກອງທຶນ CEPF-RIT, ອົງການ BirdLife ສາກົນ ປະຈຳພາກພື້ນອິນໂດຈີນ,
N6/2+3, Lane 25, Lang Ha Street, Hanoi, Vietnam
ອີເມລ: cepf-rit@birdlife.org.vn; ເວັບໄຊ: www.birdlifeindochina.org/cepf
ໂທລະສັບ: +84 (0)4 3514 8904 (ຕໍ່. 28); *ແຟັກ:* +84 (0)4 3514 8921.